ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1424/ອຄ.

ນະຄອນຫຼວງວຽງຈັນ, ວັນທີ 12 ສິງຫາ 2016

# ຂໍ້ຕົກລົງ
# ວ່າດ້ວຍລະບຽບ ການຕິດຕາມ ກວດກາ ໂຄງການລົງທຶນຂອງລັດ ເລີ່ມແຕ່ຫົວທີ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ.
- ອີງຕາມ ດຳລັດຂອງລັດຖະບານ ສະບັບເລກທີ 01/ລບ, ລົງວັນທີ 06 ມັງກອນ 2015 ວ່າດ້ວຍການຕິດຕາມ ກວດກາໂຄງການລົງທຶນຂອງລັດ ເລີ່ມແຕ່ຫົວທີ.
- ອີງຕາມ ບົດແນະນຳ ຂອງອົງການກວດກາລັດຖະບານ ສະບັບເລກທີ 46/ອກລ, ລົງວັນທີ 04 ມີນາ 2015 ວ່າດ້ວຍ ການຈັດຕັ້ງປະຕິບັດ ດຳລັດ ສະບັບເລກທີ 01/ລບ.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ, ມາດຕະການ ແລະ ວິທີດຳເນີນການຕິດຕາມກວດກາ ໂຄງການລົງທຶນຂອງລັດ ເລີ່ມແຕ່ຫົວທີ ຢູ່ໃນຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອປ້ອງກັນການລະເມີດກົດໝາຍລະບຽບການ ແລະ ພຶດຕິກຳອື່ນໆ ທີ່ເປັນການສໍ້ລາດບັງຫຼວງ ແນໃສ່ເຮັດໃຫ້ໂຄງການລົງທຶນຂອງລັດຢູ່ໃນຂະແໜງອຸດສາຫະກຳແລະ ການຄ້າ ໄດ້ຮັບການປະຕິບັດດ້ວຍຄວາມໂປ່ງໃສ, ປະຢັດ ແລະ ມີປະສິດທິຜົນສູງ.

### ມາດຕາ 2 ການຕິດຕາມ ກວດກາ ໂຄງການລົງທຶນຂອງລັດ ເລີ່ມແຕ່ຫົວທີ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ

ການຕິດຕາມ ກວດກາ ໂຄງການລົງທຶນຂອງລັດ ເລີ່ມແຕ່ຫົວທີ ແມ່ນການຕິດຕາມ ກວດກາເປັນປົກກະຕິຕໍ່ຜູ້ປະຕິບັດໂຄງການ ເພື່ອໃຫ້ຮູ້ ແລະ ກຳໄດ້ສະພາບຂໍ້ມູນໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດນັບແຕ່ເລີ່ມຕົ້ນປະຕິບັດໂຄງການເປັນຕົ້ນໄປ ຊຶ່ງໂຄງການລົງທຶນຂອງລັດຢູ່ໃນຂະແໜງອຸດສາຫະກຳ ແລະ ການຄ້າທີ່ຈະຕ້ອງຕິດຕາມ ກວດກາ ເລີ່ມແຕ່ຫົວທີ ແມ່ນໂຄງການລົງທຶນຂອງລັດທຸກປະເພດທີ່ນຳໃຊ້ງົບປະມານຂອງລັດ, ທຶນສົມທົບ, ທຶນຊ່ວຍເຫຼືອລ້າ ແລະ ທຶນກູ້ຢືມ ຈາກພາຍໃນ ແລະ ຕ່າງປະເທດ ໂດຍມີການເລືອກເຟັ້ນ ແລະ ມີຈຸດສຸມ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. ຜູ້ປະຕິບັດໂຄງການໝາຍເຖິງ ເຈົ້າຂອງໂຄງການ, ຄະນະຮັບຜິດຊອບໂຄງການ, ຜູ້ຄຸ້ມຄອງ ແລະ ນໍາໃຊ້ໂຄງການ, ບໍລິສັດທີ່ປຶກສາໂຄງການ ແລະ ຜູ້ຮັບເໝົາໂຄງການ.

2. ຄະນະຕິດຕາມ ກວດກາ ໝາຍເຖິງ ພະນັກງານທີ່ເຮັດວຽກງານກວດກາລັດ ສັງກັດຢູ່ຂະແໜງອຸດສາຫະກໍາ ແລະ ການຄ້າ ແລະ ມາຈາກພາກສ່ວນທີ່ກ່ຽວຂ້ອງແຕ່ລະຂັ້ນ ທີ່ຖືກແຕ່ງຕັ້ງມອບໝາຍໃຫ້ປະຕິບັດໜ້າທີ່ຕິດຕາມ ກວດກາ ການປະຕິບັດໂຄງການລົງທຶນຂອງລັດ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ປະຕິບັດວຽກງານຕິດຕາມ ກວດກາ ແລະ ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ໃນຂະແໜງອຸດສາຫະກໍາ ແລະ ການຄ້າ.

## ໝວດທີ 2
## ຂັ້ນຕອນ ແລະ ວິທີຕິດຕາມກວດກາ

**ມາດຕາ 5 ຂັ້ນຕອນ**

ການຕິດຕາມ ກວດກາ ໄດ້ດໍາເນີນຕາມສາມຂັ້ນຕອນດັ່ງນີ້:

**ກ. ຂັ້ນຕອນການກະກຽມ**

1. ລັດຖະມົນຕີກະຊວງເປັນຜູ້ແຕ່ງຕັ້ງຄະນະຕິດຕາມ ກວດກາ ໂດຍມີປະທານກວດກາກະຊວງເປັນຜູ້ຊີ້ນໍາ ແລະ ມີພະນັກງານວິຊາການທີ່ມາຈາກກົມກວດກາ ແລະ ມາຈາກບັນດາກົມກອງຂະແໜງທີ່ກ່ຽວຂ້ອງ ເພື່ອດໍາເນີນການຕິດຕາມ ກວດກາໂຄງການລົງທຶນຂອງລັດທີ່ຂຶ້ນກັບການຄຸ້ມຄອງໂດຍກົງຂອງຂະແໜງອຸດສາຫະກໍາ ແລະ ການຄ້າ.

2. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແຈ້ງຂໍ້ຕົກລົງ ວ່າດ້ວຍການໃຫ້ຕິດຕາມ ກວດກາໂຄງການ, ເກັບກໍາຂໍ້ມູນ, ເອກະສານຕ່າງໆ ກ່ຽວກັບໂຄງການທີ່ເປັນເປົ້າໝາຍຕິດຕາມ ກວດກາ, ລົງເລິກເກັບກໍາສະພາບການຢູ່ພື້ນທີ່ດໍາເນີນໂຄງການ, ຄົ້ນຄວ້າກໍາແໜ້ນລະບຽບ, ກົດໝາຍ ແລະ ເອກະສານສໍາຄັນອື່ນໆ ເພື່ອສ້າງເປັນແຜນການດໍາເນີນງານໃນການຕິດຕາມ ກວດກາໂຄງການ.

3. ສ້າງແຜນການເຄື່ອນໄຫວຕິດຕາມ ກວດກາ, ອອກລະບຽບການສະເພາະສໍາລັບຄະນະຕິດຕາມ ກວດກາ ຈັດຕັ້ງ ແລະ ແນະນໍາພະນັກງານ ທີ່ຖືກແຕ່ງຕັ້ງໄປຕິດຕາມ ກວດກາ ໃຫ້ກໍາແໜ້ນຈຸດປະສົງ, ລະດັບຄາດໝາຍເນື້ອໃນຂອງການຕິດຕາມກວດກາ ແລະ ກໍາແໜ້ນລະບຽບຂອງຄະນະຕິດຕາມ ກວດກາ ພ້ອມທັງແບ່ງໜ້າທີ່ຄວາມຮັບຜິດຊອບໃຫ້ແຕ່ລະຄົນຢ່າງລະອຽດຈະແຈ້ງ.

4. ກະກຽມງົບປະມານ, ພາຫະນະ, ອຸປະກອນຮັບໃຊ້ວິຊາສະເພາະສໍາລັບການເຄື່ອນໄຫວວຽກງານຕິດຕາມກວດກາ.

**ຂ. ການດໍາເນີນການກວດກາ**

1. ຫົວໜ້າຄະນະກໍາມະການກວດກາ ແຈ້ງແຜນ ລົງຕິດຕາມກວດກາໃຫ້ເຈົ້າຂອງໂຄງການ, ຄະນະຮັບ